## ມິຊຊາອາທິດທີ 2 ກຳນົດບຳເພັນສິນປີ A
## ວັນທີ 8 ມີນາ 2020



**ພຣະວໍລະສານໂດຍນັກບຸນມັດເທວ 17, 1-9**

ໃນເວລານັ້ນ ພຣະເຢຊູເຈົ້າໄດ້ເອົາເປໂຕ, ຢາໂກເບແລະຢວງຜູ້ນ້ອງໄປນຳ ແລ້ວພາຂຶ້ນພູສູງໜ່ວຍໜຶ່ງ. ພຣະອົງໄດ້ສຳແດງພຣະກາຍຮຸ່ງເຮືອງຕໍ່ໜ້າພວກເຂົາ. ພຣະພັກຂອງພຣະອົງຮຸ່ງແຈ້ງຄືດວງຕາເວັນ ເຄື່ອງທົງຂອງພຣະອົງຂາວງາມຄືລໍຝ້າຍ. ໃນເວລານັ້ນ, ໂມແຊກັບເອລີຢາ ກໍປະຈັກມາສົນທະນາກັບພຣະອົງ. ເປໂຕຈຶ່ງທູນພຣະອົງວ່າ: ພຣະອາຈານເອີຍ, ຢູ່ບ່ອນນີ້ເກີນວ່າມ່ວນຫລາຍ. ຖ້າຫາກວ່າພຣະອາຈານພໍໃຈນຳ ພວກຂ້ານ້ອຍຈະສ້າງຜາສາດສາມຫລັງ. ຫລັງໜຶ່ງຖະຫວາຍພຣະອາຈານ, ຫລັງໜຶ່ງຖະຫວາຍໂມແຊ ແລະອີກຫລັງໜຶ່ງຖະຫວາຍທ່ານເອລີຢາ.

ໃນເວລາເປໂຕພວມເວົ້າຢູ່ນັ້ນ, ກໍມີເມກຮຸ່ງເຫລື້ອມກ້ອນໜຶ່ງມາປົກບັງພວກເຂົາໄວ້. ແລ້ວມີສຽງກ່າວອອກມາແຕ່ເມກວ່າ: ຜູ້ນີ້ແມ່ນບຸດສຸດທີ່ຮັກຂອງເຮົາ, ເຮົາພໍໃຈນຳເປັນຢ່າງຍິ່ງ, ພວກເຈົ້າຈົ່ງເຊື່ອຟັງພຣະອົງເຖີດ. ໄດ້ຍິນຄວາມນີ້ພວກລູກສິດກໍພາກັນໝູບຕິດດິນ ແລະມີຄວາມຢ້ານກົວເປັນຢ່າງຍິ່ງ. ພຣະເຢຊູເຈົ້າສະເດັດມາໃກ້ໆພວກເຂົາ ບາຍຕ້ອງພວກເຂົາແລະກ່າວວ່າ: ຈົ່ງລຸກຂຶ້ນ ຢ່າຢ້ານກົວເລີຍ. ພວກລູກສິດມືນຕາຂຶ້ນແນມເບິ່ງ, ບໍ່ເຫັນໃຜ, ເຫັນແຕ່ພຣະເຢຊູເຈົ້າຜູ້ດຽວ. ເມື່ອພ້ອມກັນລົງຈາກພູ, ພຣະເຢຊູເຈົ້າໄດ້ສັ່ງບອກພວກເຂົາວ່າ: ຢ່າເວົ້າສິ່ງທີ່ໄດ້ເຫັນນັ້ນໃຫ້ຜູ້ໃດຟັງ ຈົນຮອດເວລາບຸດມະນຸດຈະໄດ້ກັບຄືນຊີບຈາກພວກຜູ້ຕາຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 17, 1-9**

ອາທິດທີ່ຜ່ານມາ, ພວກເຮົາໄດ້ເຂົ້າໃນທີ່ປ່ຽວພ້ອມກັບພຣະເຢຊູເຈົ້າພາຍໃຕ້ການນຳພາຂອງພຣະຈິດ ເພື່ອຢູ່ນຳພຣະອົງຕະຫລອດສີ່ສິບວັນ. ໃນຊ່ວງເວລານີ້, ຜີປີສາດໄດ້ມາຫລອກລວງພຣະເຢຊູເຈົ້າ. ໃນການປະຈົນຫລອກລວງຂອງຜີປີສາດທຳໃຫ້ພວກເຮົາເຫັນເຖິງຄວາມເປັນມະນຸດໃນຕົວຂອງພຣະອົງ. ພຣະອົງກໍຮູ້ສຶກຫິວເໝືອນກັບພວກເຮົາ, ແຕ່ພຣະອົງບໍ່ໄດ້ຖືເອົາອາຫານຝ່າຍໂລກເປັນສິ່ງສຳຄັນໃນຊີວິດ ແຕ່ແມ່ນວາຈາພຣະເຈົ້າ. ພຣະເຢຊູເຈົ້າກໍມີຄວາມຢ້ານກົວເໝືອນກັບພວກເຮົາ ເມື່ອຜີປີສາດພາພຣະອົງຂຶ້ນຈອມວິຫານຢູ່ນະຄອນເຢລູຊາແລມ, ແຕ່ພຣະອົງເຊື່ອໝັ້ນວ່າພຣະບິດາຈະບໍ່ປະຖິ້ມພຣະອົງຕໍ່ໜ້າໄພອັນຕະລາຍໃດທັງສິ້ນ. ແທນທີ່ພຣະເຢຊູເຈົ້າຈະໃຊ້ລິດເດດໃນການເປັນພຣະເຈົ້າເພື່ອທຳຕາມຄຳຫລອກລວງຂອງຜີປີສາດ, ແຕ່ໃນຄວາມເປັນມະນຸດພຣະອົງໄດ້ຍອມໃຫ້ຜີປີສາດມາຫລອກລວງເພື່ອຢາກສອນພວກເຮົາວ່າ ມີຜູ້ທີ່ຍິ່ງໃຫຍ່ກວ່າພະຍາມານແລະການປະຈົນຫລອກລວງທຸກຢ່າງຂອງໂລກນັ້ນຄືພຣະເຈົ້າພຣະບິດານັ້ນເອງ.

ສ່ວນວັນອາທິດນີ້, ພຣະກຣິສຕະຈັກໃຫ້ພວກເຮົາໄດ້ຟັງແລະລຳເພິງເຖິງການສຳແດງພຣະກາຍຮຸ່ງເຮືອງຂອງພຣະເຢຊູເຈົ້າບົນພູເຂົາຕໍ່ໜ້າພວກລູກສິດຂອງພຣະອົງຄື: ເປໂຕ, ຢາໂກເບ ແລະຢວງຜູ້ນ້ອງຊາຍ.

ອາທິດແລ້ວນີ້, ພຣະເຢຊູເຈົ້າໄດ້ເຂົ້າໃນທີ່ປ່ຽວ, ສະຖານທີ່ແຫ່ງການປະຈົນຫລອກລວງຂອງຜີປີສາດ. ວັນນີ້ພຣະເຢຊູເຈົ້າໄດ້ຂຶ້ນບົນພູເຂົາ, ສະຖານທີ່ແຫ່ງການພົບພໍ້ກັບພຣະເຈົ້າ. ອາທິດແລ້ວນີ້, ພຣະເຢຊູເຈົ້າຖືກປະຈົນຫລອກລວງຈາກຜີປີສາດ ເພື່ອສະແດງໃຫ້ພວກເຮົາເຫັນເຖິງຄວາມເປັນມະນຸດຂອງພຣະອົງ. ວັນນີ້, ພຣະເຢຊູເຈົ້າໄດ້ສຳແດງພຣະກາຍຮຸ່ງເຮືອງຂອງພຣະອົງໃຫ້ພວກລູກສິດເຫັນ ເພື່ອສະແດງເຖິງສະພາບເປັນພຣະເຈົ້າຂອງພຣະອົງ. ການປ່ຽນພຣະກາຍຂອງພຣະເຢຊູເຈົ້າຈາກຮ່າງກາຍເປັນມະນຸດມາເປັນພຣະກາຍຮຸ່ງເຮືອງນີ້ ເປັນການສຳແດງໃຫ້ພວກເຮົາເຫັນລ່ວງໜ້າເຖິງການກັບເປັນຄືນມາຈາກຄວາມຕາຍຂອງພຣະອົງ. ແຕ່ກ່ອນທີ່ຈະເຖິງເວລານັ້ນ, ພຣະເຢຊູເຈົ້າຈຳຕ້ອງຖືກຈັບ, ທໍລະມານ, ແບກກາງເຂນແລະຕາຍ. ຫລືເວົ້າອີກຢ່າງ, ກ່ອນທີ່ຈະເຖິງວັນປາສກາ, ວັນແຫ່ງໄຊຊະນະແຫ່ງຄວາມຕາຍນັ້ນ, ພຣະເຢຊູເຈົ້າຕ້ອງໄດ້ຜ່ານວັນສຸກສັກສິດ, ວັນທີ່ພຣະອົງຖືກທໍລະມານແລະຕາຍ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງໄດ້ຫ້າມພວກລູກສິດບໍ່ໃຫ້ພວກເຂົາເລົ່າສິ່ງທີ່ພວກເຂົາໄດ້ເຫັນບົນພູເຂົາ ກ່ອນທີ່ບຸດມະນຸດຈະກັບເປັນຄືນມາຈາກພວກຜູ້ຕາຍ.

ຖ້າພວກເຮົາເປັນສິດຂອງພຣະເຢຊູເຈົ້າ, ພວກເຮົາໄດ້ເຂົ້າໃນທີ່ປ່ຽວພ້ອມກັບພຣະອົງ, ໄດ້ຖືກປະຈົນຫລອກລວງ ແລະໄດ້ຕາຍເໝືອນກັບພຣະອົງ. ແນ່ນອນ, ພ້ອມກັບພຣະເຢຊູເຈົ້າພວກເຮົາຈະໄດ້ຊະນະການປະຈົນຫລອກລວງ ແລະພ້ອມກັບພຣະອົງພວກເຮົາຈະໄດ້ກັບເປັນຄືນມາຈາກຄວາມຕາຍເຊັ່ນດຽວກັນ.

ສິ່ງນີ້ເປັນກຳລັງໃຈແລະຄວາມຫວັງສຳລັບພວກເຮົາໃນການເດີນທາງຢູ່ບົນໂລກນີ້ ແລະເປັນຕົ້ນໃນການດຳລົງຊີວິດໃນກຳນົດບຳເພັນສິນນີ້, ເພື່ອພວກເຮົາຈະໄດ້ພ້ອມກັບພຣະອົງກັບເປັນຄືນມາໃນວັນປາສກາທີ່ຈະມາເຖິງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ